# ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດ, ທີ 17 ເມສາ 2505 ( 4-17-2005 )

---

## ວາຈາທີ່ຖືກຄວບຄຸມ

**ພື້ນຖານຂອງເຣື່ອງ :** ( ຢາກບ 3:1-12; 4:11-12; 5:12 )

**ພຣະຄັມພີຂໍ້ສຳຄັນ :** ( ຢາກບ 3:22-12; 4:11-12; 5:12 )

**ຄວາມຈິງໃນພຣະຄັມພີ :** ຄົນທີ່ມີຄວາມເຊື່ອແທ້ຈະຮັບເອົາຄວາມຊ່ອຍເຫລືອຈາກພຣະເຈົ້າເພື່ອຈະຄວບຄຸມຄຳເວົ້າຂອງພວກເຂົາ.

**ຜົນສະທ້ອນຕໍ່ຊີວິດ :** ເພື່ອຊ່ອຍທ່ານໃຫ້ຮັບເອົາຄວາມຊ່ອຍເຫລືອຈາກພຣະເຈົ້າເພື່ອຈະຄວບຄຸມຄຳເວົ້າຂອງພວກທ່ານ.

## ຄວາມເຊື່ອຈິງຈະກະທົບກັບຄຳເວົ້າຂອງຂ້າພະເຈົ້າຢ່າງໃດ?

ຄຳເວົ້າທີ່ທ່ານເວົ້າອອກມານັ້ນສຳຄັນຫລາຍຢ່າງໃດ? ຈົ່ງພິຈາຣະນາເບິ່ງຄຳເວົ້າຂອງພຣະເຢຊູທີ່ວ່າ, ເຮົາບອກພວກທ່ານວ່າ ຖ້ອຍຄຳເປົ່າໆທຸກຄຳທີ່ມະນຸດເວົ້າ ເຂົາຈະຕ້ອງໃຫ້ການເພາະຄຳນັ້ນໃນວັນພິພາກສາ. "ດ້ວຍເຫດວ່າທີ່ທ່ານຈະພົ້ນໂທດໄດ້ຫລືຈະຕ້ອງຖືກໂທດນັ້ນ ກໍເພາະດ້ວຍຄຳເວົ້າຂອງຕົນ." ( ມທ 12:36-37 ). ມີຫຽັງທີ່ເວົ້າກ່ຽວກັບຄຳເວົ້າຂອງມະນຸດທີ່ສຳຄັນໄປກວ່າອັນນີ້? ທ່ານຮູ້ສຶກມີຄວາມຕ້ອງການຄວາມຊ່ອຍເຫລືອເພື່ອຄວບຄຸມຄຳເວົ້າຂອງທ່ານບໍ່?

ບົດຮຽນນີ້ຈະເຕືອນພວກເຮົາເຖິງຄວາມຕ້ອງການໆຮັກສາຄຳເວົ້າຂອງພວກເຮົາຢ່າງຣະມັດຣະວັງ. ທ່ານຈະຖືກທ້າທາຍໃຫ້ຄິດກ່ອນຈຶ່ງຄ່ອຍເວົ້າ ແລະໃຫ້ອີງໃສ່ການຊ່ອຍເຫລືອຈາກພຣະເຈົ້າເພື່ອຈະເວົ້າແຕ່ຄຳທີ່ຖືກຕ້ອງ.

## ສຶກສາພຣະຄັມພີ

### 1- ຈົ່ງຄວບຄຸມລີ້ນຂອງທ່ານ : ( ຢາກບ 3:22-6 )

ຄວາມສຳຄັນຂອງຄຳເວົ້າທີ່ເວົ້າອອກມາແມ່ນເນື້ອເຣື່ອງທີ່ຢາໂກໂບໄດ້ເວົ້າເຖິງໃນຈົດໝາຍຂອງເພິ່ນສະບັບນີ້. ໃນບົດທີນຶ່ງ ພວກເຮົາໄດ້ຖືກແນະນຳໃຫ້ "ໄວໃນການຟັງ, ແລະໃຫ້ຊ້າໃນການເວົ້າ", ເພາະວ່າ "ຖ້າຜູ້ໃດຄິດວ່າຕົນເປັນຄົນມີທັມມະ ແລະບໍ່ໄດ້ຫ້າມລີ້ນຂອງຕົນ ແຕ່ໄດ້ລໍ້ລວງຕົນເອງ ທັມມະຂອງຄົນນັ້ນກໍບໍ່ມີປະໂຍດ. ( ຢາກບ 1:26 ). ໃນບົດທີສອງເຮົາໄດ້ຖືກຮ້ອງຂໍໃຫ້, " ເວົ້າແລະເຮັດ ເໝືອນຢ່າງຄົນທີ່ຈວນຈະໄດ້ຮັບການພິພາກສາດ້ວຍກົດທີ່ໃຫ້ມີເສຣີພາບ." ບົດຮຽນນີ້ເປັນເຣື່ອງດຽວກັນໃນບົດທີສາມ, ສີ່, ແລະຫ້າ. ການເວົ້າທີ່ຂາດຄວາມຣະມັດຣະວັງເປັນບັນຫາອັນຮ້າຍແຮງສຳລັບຄົນທີ່ອ່ານພຣະທັມຢາໂກໂບໃນສມັຍນັ້ນ, ສຳລັບພວກເຮົາໃນສມັຍນີ້ກໍເຊັ່ນດຽວກັນ.

ຄວາມຄາດໝາຍຂອງການເປັນຜູ້ໃຫຍ່ແລ້ວຝ່າຍຈິດວິນຍານ ຄວນຈະເປັນຄວາມມຸ້ງຫວັງຂອງຄົນທີ່ເຊື່ອທຸກໆຄົນ. ເຄື່ອງໝາຍອັນນຶ່ງຂອງການເປັນຜູ້ໃຫຍ່ແມ່ນຄວາມສາມາດຄວາມຄຸມຄວາມເວົ້າຂອງຕົນ. ຢາໂກໂບໄດ້ເວົ້າເຖິງຄົນທີ່ບໍ່ໄດ້ຊູນສະດຸດທາງວາຈາ( ທຳຜິດທາງວາຈາ). ເພິ່ນໃຊ້ຄຳວ່າຊູນສະດຸດຊຶ່ງໝາຍຄວາມວ່າພາດພັ້ງ, ຫລືເຮັດຜິດພາດ, ມີຄວາມຜິດ, ຫລືວ່າໄດ້ກະທຳບາບ. ຄົນໃດທີ່ໄດ້ຮຽນຄວບຄຸມຄຳເວົ້າຂອງຕົນເອງນັ້ນຜູ້ນັ້ນ

ເປັນຜູ້ໃຫຍ່ ແລະທັງໄດ້ຄວບຄຸມໝົດທັງຕົວຂອງຕົນເອງ. ຈະເວົ້າອີກຢ່າງນຶ່ງແລ້ວຄືການເປັນນາຍຄຳເວົ້າຂອງຕົນເອງນັ້ນແມ່ນຍາກກວ່າການທີ່ຈະຝຶກແອບສິ່ງອື່ນໆ.

ຢາໂກໂບໄດ້ໃຊ້ຄຳອຸປະມາຫລາຍຢ່າງເພື່ອຈະໃຫ້ເຫັນພາບແຫ່ງອຳນາດຂອງລີ້ນ:

1 - <u>ບັງຫຽນມ້າ</u>, ແມ່ນເຫລັກໄຫຍ້ມ້າທີ່ເປັນເຄື່ອງໃຊ້ອັນນຶ່ງສຳລັບໃສ່ທີ່ປາກມ້າເພື່ອຄົນຂີ່ມ້ານັ້ນຈະໄດ້ບັງຄັບມ້າທັງຕົວ. ໃນທາງຄ້າຍຄືກັນ ຄົນທີ່ເຊື່ອຈະຕ້ອງບັງຄັບລີ້ນຂອງຕົນໃຫ້ຢູ່ພາຍໃຕ້ການຊີ້ນຳພາຂອງພຣະເຈົ້າໃຫ້ໄດ້. ແລະແລ້ວທຸກຢ່າງກໍຈະໄດ້ພາກັນຟັງຄວາມນຳກັນ.

2 - <u>ໄມ້ໂທມທ້າຍ</u>, ໄມ້ໂທມທ້າຍນ້ອຍໆກໍຍັງສາມາດໃຫ້ຄົນຂັບເຮືອບັງຄັບເຮືອລຳໃຫຍ່ໆໃຫ້ຟັງຄວາມໄດ້. ເຊັ່ນດຽວກັນກັບໄຫຍ້ໃນປາກມ້າ, ແລະໄມ້ໂທມທ້າຍນ້ອຍໆຂອງກຳປັ່ນເດີນມະຫາສມຸດ, ລີ້ນກໍມີອຳນາດອັນແຂງແຮງທີ່ຈະຄວບຄຸມຮ່າງກາຍທັງໝົດ.

3 - <u>ສະເກັດໄຟ</u>, ແມ່ນໄຟເມັດນ້ອຍໆຍັງສາມາດເຜົາຜານໝົດທັງປ່າ. ໃນຂໍ້ 5-6 ຢາໂກໂບໄດ້ຈຸດສຸມໃສ່ອຳນາດອັນຫລວງຫລາຍຂອງລີ້ນທີ່ເຜົາຜານແລະທຳລາຍ. ການກ່າວຂວັນນິນທາກັນພຽງເລັກນ້ອຍກໍສາມາດທຳລາຍກັນຢ່າງມະຫາສານ. ກຽດຕິຍົດຊື່ສຽງຂອງຄົນໆນຶ່ງສາມາດຖືກທຳລາຍໄປ; ສາຍສຳພັນກໍຖືກທຳລາຍ; ພຽງແຕ່ຄຳເວົ້າອັນເລັກນ້ອຍເທົ່ານັ້ນມັນສາມາດເປັນທີ່ມາຂອງເສັຽຫາຍທີ່ບໍ່ອາດສ້ອມແປງໃຫ້ດີຄືນໄດ້.

ໃນຕອນທ້າຍຂອງຂໍ້ 6 ໄດ້ເວົ້າເຖິງອຳນາດຮ້າຍຂອງລີ້ນວ່າ, " ເປັນເຫດໃຫ້ທັງຕົວຊົ່ວມົວໝອງໄປ. ຢາໂກໂບໄດ້ໃຊ້ຄຳວ່າ ຊົ່ວມົວໝອງ ຊຶ່ງແປວ່າເປັນຈຸດດ່າງທີ່ລ້າງບໍ່ອອກ. ຄຳດຽວກັນນີ້ຍັງໄດ້ໃຊ້ໃນຂໍ້ 1:27 ທີ່ວ່າ ທັມມະທີ່ບໍຣິສຸດແລະບໍ່ມີການຊົ່ວມົວໝອງ ຊຶ່ງແປວ່າ ຮັກສາຕົນເອງໄວ້ບໍ່ໃຫ້ດ່າງພ້ອຍຈາກໂລກ. ອິດທິພົນອັນໃຫຍ່ໄພສານຂອງຄຳເວົ້າແມ່ນໄດ້ເນັ້ນໜັກຕາມທີ່ພຣະຄຳທີ່ວ່າ ເປັນເຊື້ອໄຟທີ່ເຜົາໄໝ້ວົງກະແສແຫ່ງຊີວິດ.

ຈົ່ງຄິດເບິ່ງວ່າວິຖີຊີວິດຂອງຄົນໆນຶ່ງຈະຕ້ອງຖືກເຜົາໄໝ້ຈາກຄຳເວົ້າທີ່ຊົ່ວຮ້າຍ. ການທຳລາຍທີ່ໝົດສິ້ນນີ້ມາຈາກຫຍັງ? ລີ້ນນັ້ນເປັນໄຟທີ່ຕິດມາຈາກນະຣົກ. ຢາໂກໂບໄດ້ສືບສວນເບິ່ງສາຍເຫດຄອງຄຳເວົ້າທີ່ຊົ່ວແລະອຳນາດທັງໝົດຂອງມັນຈະທຳໃຫ້ເປື່ອຍເນົ່າກັບຄືນເມືອຍັງທີ່ກຳເນີດອັນແທ້ຂອງມັນ, ຄືຊາຕານແລະພວກຜີມານຂອງມັນ. ຈົ່ງຟັງເບິ່ງຄຳເວົ້າຂອງພຣະເຢຊູທີ່ກ່ຽວກັບຜີມານ, " ໃນຕົວມັນບໍ່ມີຄວາມຈິງ. ເມື່ອມັນເວົ້າຕົວະມັນກໍເວົ້າຕາມສັນດານຂອງມັນເອງ ເພາະເປັນຜູ້ຕົວະແລະເປັນພໍ່ຂອງການຕົວະ" ( ຢຮ 8:44 ).

## <u>2- ຈົ່ງຈົດຈຳອຳນາດທີ່ຊ້ອນໃນຄຳເວົ້າ :</u> ( ຢກບ 3:7-12 )

ຄວາມເປັນໃຫຍ່ຂອງມະນຸດເໜືອທຸກສິ່ງໃນຊີວິດໄດ້ເປັນທີ່ຮັບຮອງຈາກຫລັກຖານຫລາຍຢ່າງ. ເຖິງຢ່າງໃດກໍດີ, ແຕ່ກໍຍັງມີອັນນຶ່ງທີ່ສຳຄັນຍິ່ງໃນຊີວິດທີ່ຍັງບໍ່ທັນເອົາຊະນະໄດ້ເທື່ອນັ້ນຄື " ລີ້ນນັ້ນຍັງບໍ່ມີມະນຸດຄົນໃດສາມາດຝຶກແອບໄດ້. ຈົ່ງສັງເກດເບິ່ງວ່າຢາໂກໂບບໍ່ໄດ້ຍົກເວັ້ນໃຫ້ອັນໃດນອກຈາກຄຳວ່າ: ບໍ່ມີມະນຸດຄົນໃດຈະສາມາດຄວບຄຸມຄຳເວົ້າຂອງຕົນເອງໄດ້ຢ່າງຄົບຖ້ວນນອກຈາກພຣະເຢຊູ.

ເປັນຫຍັງເຣື່ອງການຝຶກແອບລີ້ນຈຶ່ງເປັນບັນຫາສຳຄັນ? ຢາໂກໂບໄດ້ຕອບຄຳຖາມນີ້ດ້ວຍການຊີ້ໃຫ້ເຫັນອຳນາດຂອງຄວາມຊົ່ວຮ້າຍທີ່ແຝງຢູ່ໃນຄວາມສາມາດຂອງຄົນທີ່ເວົ້າ. ເພິ່ນຮ້ອງມັນວ່າ ມັນເປັນສິ່ງທີ່ຊົ່ວເຫລືອຄວາມບັງຄັບ ຊຶ່ງເປັນຄຳທີ່ໝາຍຄວາມວ່າຜີມານຮ້າຍທີ່ຄວບຄຸມບໍ່ໄດ້ ແຕ່ວ່າສັດປ່າສັດຮ້າຍກໍຍັງແອບແລະຄວບຄຸມໄດ້. ບໍ່ພຽງແຕ່ເທົ່ານີ້ ຄຳເວົ້າຍັງເປັນເໝືອນພິດຮ້າຍທີ່ເຮັດໃຫ້ຕາຍໄດ້ຢ່າງພິດງູຊຶ່ງເປັນສາຍເຫດເຮັດໃຫ້ຊື່ສຽງຂອງຄົນ ຫລືຄວາມສຳພັນກັບຄົນໃດຄົນນຶ່ງໃຫ້ສູນສິ້ນໄປ. ນີ້ແຫລະຄືຄວາມທຳລາຍທີ່ຕາມມາຈາກການໃຊ້ຄຳເວົ້າທີ່ບໍ່ຖືກຕ້ອງຈະເອົາມານອບໃຫ້.

ຄຳຕັກເຕືອນຂອງຢາໂກໂບໃນຕອນນີ້ແມ່ນກ່ຽວກັບຄວາມບໍ່ສມ່ຳສເມີຂອງການໃຊ້ລີ້ນອັນດຽວກັນເພື່ອເວົ້າທາງດີແລະທາງຊົ່ວຮ້າຍ. ຄຳສັຣະເສີນພຣະເຈົ້າດ້ວຍຄຳເວົ້າທີ່ຮູ້ຂອບຄຸນເປັນການໃຊ້ລີ້ນໃນທາງສູງສົ່ງ. ເປັນດ້ວຍເຫດໃດການໃຊ້ລີ້ນອັນດຽວກັນນີ້ຈຶ່ງບໍ່ສມ່ຳສເມີບາງເທື່ອກໍສັຣະເສີນພຣະເຈົ້າ ແລະແລ້ວກໍປ້ອຍດ່າຄົນທີ່ພຣະເຈົ້າໄດ້ສ້າງເຂົາຂຶ້ນມາ. ຈົ່ງສັງເກດການໃຊ້ຄຳທີ່ວ່າ ພຣະບິດາ ເພື່ອຕັກເຕືອນຄົນທີ່ອ່ານພຣະທັມວ່າການຄົນທີ່ຖືກປ້ອຍດ່າ

ນັ້ນອາດຈະແມ່ນສະມາຊິກໃນຄອບຄົວຂອງຄຣິສຕຽນດ້ວຍກັນ. ເຮົາຊ່າງເປັນຄົນໜ້າໄຫວ້ຫລັງຫລອກແທ້ນໍ ເມື່ອເຮົາກ່າວຄຳສັຣເສີນແລະຄຳປ້ອຍດ່າອອກມາຈາກປາກອັນດຽວກັນ!

ເພື່ອຈະເນັ້ນໜັກຄວາມປະຕິບັດທີ່ບໍ່ສມ່ຳສເມີອອກໄປວ່າເປັນຢ່າງໃດນັ້ນ, ຢາໂກໂບໄດ້ຊີ້ໃສ່ຄວາມປ່ຽນແປງຫລາຍຢ່າງຂອງທັມມະຊາດ. ອັນທຳອິດນັ້ນແມ່ນນ້ຳພຸທີ່ສິດນ້ຳຫວານ ຫລືບາງເທື່ອກໍສິດນ້ຳຂົມອອກມາ ແຕ່ວ່ານ້ຳຂົມແລະນ້ຳຫວານຈະບໍ່ອອກມາພ້ອມກັນຈັກເທື່ອ. ໃນທຳນອງດຽວກັນນັ້ນ ຈົ່ງພິຈາຣະນາເບິ່ງຕົ້ນໄມ້ ແລະເຄືອໄມ້. ຕົ້ນໝາກເດື່ອຈາກເກີດຜົນເປັນໝາກເດື່ອ; ໝາກກອກເທດຈະອອກມາຈາກຕົ້ນໝາກກອກເທດ; ເຄືອອະງຸ່ນກໍຈະອອກຜົນເປັນໝາກອະງຸ່ນ. ສິ່ງທັງມວນນີ້ເປັນໄປຕາມທັມມະຊາດ ຄືບອກໄວ້ກ່ອນລ່ວງໜ້າໄດ້. ແລະໃຜກໍຮູ້ວ່ານ້ຳພຸນ້ຳຂົມຈະບໍ່ສິດນ້ຳຈືດອອກມາໄດ້. ທັມມະຊາດຂອງໂລກເອີ້ນວ່າຄວາມແນ່ນອນ. ມັນກໍຈະເປັນຈິງດັ່ງດຽວກັນໃນຄຳເວົ້າທີ່ອອກມາຈາກມະນຸດ.

ຄຣິສຕຽນທຸກຄົນຄວນຮູ້ວ່າໃຜໆກໍເຄີຍຜິດພາດດ້ວຍກັນໃນເຣື່ອງຂອງຄຳເວົ້າ. ຈົ່ງອະທິຖານພຣະເຈົ້າເພື່ອຂໍການອະພັຍ ແລ້ວຈຶ່ງຂໍອຳນາດຈາກພຣະອົງເພື່ອມາຄວບຄຸມວາຈາຂອງຕົນ.

## <u>3- ຈົ່ງເວັ້ນຈາກຄຳເວົ້າທີ່ທຳລາຍ :</u> ( ຢກບ 4:11-12 )

ຢາໂກໂບເວົ້າຕ ໍເຖິງຄຳເວົ້າທີ່ບໍ່ດີໂດຍສະເພາະເຈາະຈົງໃສ່ການເວົ້າທີ່ເປັນສາຍເຫດໃຫ້ເກີດການຜິດຖຽງກັນຣະຫວ່າງພີ່ນ້ອງຄຣິສຕຽນດ້ວຍກັນ. ເພິ່ນເວົ້າເຖິງການເວົ້າໃຫ້ກັນແລະກັນໃຫ້ເຈັບປວດ. ຄຳທີ່ວ່າການຕຳໜິຕິຕຽນແປຕາມໂຕແມ່ນເວົ້າຕ້ານ ຫລືວ່າການໃສ່ຮ້າຍຄົນໃດຄົນນຶ່ງ. ຫລາຍເທື່ອຈະມີຄົນທີ່ເຊື່ອຕ້ອງສູ້ຢັນກັນແລະກັນດ້ວຍການເວົ້າຄວາມຈິງດ້ວຍຄວາມຮັກ ເພື່ອເຮັດໃຫ້ມາເຖິງການຖິ້ມໃຈເກົ່າເອົາໃຈໃຫມ່. ແຕ່ວ່າການຕັກເຕືອນທີ່ຢາໂກໂບໄດ້ກ່າວມານີ້ ແມ່ນເພື່ອຫ້າມປາມການເວົ້າຈາໃນທາງທີ່ຖາກຖາງ, ຕິຕຽນດ້ວຍທ່າທາງທີ່ບໍ່ສຸພາບ. ເພິ່ນຮ້ອງຂໍມາຍັງຄົນທີ່ອ່ານພຣະທັມນີ້ໃຫ້ເວັ້ນໜີຈາກການຕຳໜິເພື່ອທຳລາຍກັນ. ການຊອກຄວາມຜິດທີ່ບໍ່ຈຳເປັນນັ້ນຈະບໍ່ເຮັດໃຫ້ສະພາບການດີຂຶ້ນໄດ້ຈັກເທື່ອ ແລະຍັງສາມາດເຮັດໃຫ້ເກີດຄວາມເສັຽຫາຍທີ່ສ້ອມແປງຄືນບໍ່ໄດ້ອີກ.

ຄົນທີ່ຊອບຕິຕຽນແລະຕັດສິນອ້າຍນ້ອງຂອງຕົນເອງ ບໍ່ພຽງແຕ່ໄດ້ທຳຮ້າຍຄວາມສຳພັນຣະຫວ່າງມະນຸດເທົ່ານັ້ນ ຄົນນັ້ນຍັງໄດ້ຕິຕຽນທັງໄດ້ຕັດສິນບັນຍັດຂອງພຣະເຈົ້ານຳດ້ວຍ. ມັນຈະເປັນໄປໄດ້ຢ່າງໃດ? ຢາໂກໂບອາດຈະເວົ້າເຖິງ " ບັນຍັດຮັກ " ຂອງພຣະເຈົ້າທີ່ໄດ້ກ່າວມາແລ້ວໃນບົດທີ 2:8. ຄຳວ່າ ຕັດສິນ ທີ່ຢາໂກໂບໄດ້ເວົ້ານັ້ນແປວ່າເປັນຜູ້ມີໜ້າທີ່ຕັດສິນຄວາມ. ການຕຳໜິຕິຕຽນທີ່ຮ້າຍແຮງເປັນທາງກົງກັນຂ້າມກັນກັບບັນຍັດຮັກຂອງພຣະເຈົ້າ, ດັ່ງນີ້ຄົນໃດທີ່ເຫັນຊອບແລະມັກຕຳໜິຈຶ່ງເປັນຜູ້ຕັ້ງຕົນເອງໄວ້ເປັນຄົນທີ່ຕັດສິນທີ່ປະກາດຕົນເອງວ່າຕົນເອງນັ້ນເປັນຜູ້ຖືກຕ້ອງແລ້ວ ແລະບັນຍັດຮັກຂອງພຣະເຈົ້ານັ້ນຜິດໄປ.

ຢາໂກໂບໄດ້ເຕືອນຄົນທີ່ອ່ານວ່າພຣະເຈົ້ານັ້ນເປັນຜູ້ຊອບແລ້ວທີ່ເປັນຜູ້ຊົງແຕ່ງຕັ້ງພຣະບັນຍັດ ແລະຜູ້ຊົງພິພາກສາ, ໂຜດໃຫ້ພົ້ນ, ແລະຊົງເປັນຜູ້ເຮັດໃຫ້ຈິບຫາຍພຽງແຕ່ພຣະອົງດຽວເທົ່ານັ້ນ. ດັ່ງນັ້ນ ຄົນໃດທີ່ຄິດວ່າຈະຍຶດເອົາພຣະຣາຊຕຳແໜ່ງການພິພາກສາຂອງພຣະອົງນັ້ນ ຈະໄດ້ປະສົບກັບຜົນສະທ້ອນອັນຮ້າຍແຮງ. ຢາໂກໂບໄດ້ວາງຄຳຖາມສຸດທ້າຍວ່າ: ເຈົ້າແມ່ນຜູ້ໃດທີ່ຈະກ່າວໂທດໃສ່ເພື່ອນບ້ານຂອງຕົນ? ການປະກາດອັນຊັດແຈ້ງເຊັ່ນນີ້ຄວນຈະນຳຄົນທີ່ເປັນນັກກ່າວໂທດທັງຫລາຍມາເຖິງບ່ອນຖິ້ມໃຈເກົ່າເອົາໃຈໃຫມ່ເສັຽ ແລະສະແວງຫາພຣະເມດຕາຈາກພຣະອົງຜູ້ຊົງເປັນຜູ້ພິພາກສາອົງແທ້ຈິງ.

## <u>4- ຈົ່ງເວົ້າຄວາມຈິງ :</u> ( ຢກບ 5:12 )

ຄຳວ່າ, ພີ່ນ້ອງທັງຫລາຍຂອງເຮົາເອີຍ, ທີ່ສຳຄັນກວ່າສິ່ງອື່ນໆທັງໝົດກໍຄື, ເປັນການເນັ້ນໜັກໃສ່ສິ່ງທີ່ເພິ່ນກຳລັງຈະກ່າວຕໍ່ໄປ. ຄຳສັ່ງຂອງເພິ່ນນັ້ນເປັນແບບງ່າຍໆແລະຊື່ຕົງ: ຢ່າສະບົດສາບານ. ທຸກວັນນີ້, ເມື່ອເວົ້າເຖິງການສາບານກໍເຫມືອນເປັນການໝິ່ນປມາດ, ຫລືວ່າການໃຊ້ພຣະນາມຂອງພຣະເຈົ້າຢ່າງໄຣ້ປະໂຍດ. ແນ່ນອນທີ່ສຸດ ຢາໂກໂບເຫັນວ່າ ການໃຊ້ຄຳນີ້ສຳລັບຄຣິສຕຽນແລ້ວຈະເປັນສິ່ງທີ່ໃຫ້ອະພັຍບໍ່ໄດ້. ຄົນຢິວທັງຫລາຍໃນ

ສມັຍຂອງຢາໂກໂບນັ້ນ ຈະບໍ່ກ້າໃຊ້ພຣະນາມພຣະເຈົ້າຢ່າງໄຮ້ປະໂຍດ ຫລືວ່າໃນປະການອື່ນໆ ( ອພຍ 3:14-15; 20:7 ). ພຣະນາມຂອງພຣະເຈົ້ານັ້ນຖືກຖືວ່າເປັນພຣະນາມທີ່ບໍຣິສຸດສັກສິດຊຶ່ງບໍ່ມີມະນຸດຄົນໃດຈະກ້າລ່ວງເກີນ.

ເຖິງຢ່າງໃດກໍດີ ສິ່ງທີ່ໄດ້ເຄີຍປະຕິບັດກັນມາແມ່ນການພະຍາຍາມທີ່ຈະເພີ່ມນໍ້າໜັກໃຫ້ກັບຄໍາເວົ້າຂອງຄົນໃດຄົນນຶ່ງດ້ວຍການປະຕິຍານຢ່າງໃດຢ່າງນຶ່ງ. ຕົວຢ່າງກໍແມ່ນ, " ຂ້າພະເຈົ້າສາບານດ້ວຍພຣະວິຫານວ່າສິ່ງທີ່ຂ້າພະເຈົ້າໄດ້ເວົ້າກັບທ່ານນັ້ນເປັນຄວາມຈິງ! " ຫລືວ່າລາງຄົນກໍອາດຈະສາບານດ້ວຍອ້າງສວັນ ຫລືແຜ່ນດິນໂລກ, ຫລືວ່າໃສ່ແທ່ນບູຊາ ຫລືວ່າໃສ່ບາງບ່ອນບາງທີ່ງເຫັນວ່າສັກສິດ. ການກະທໍາເຊັ່ນດຽວກັນໃນທຸກວັນນີ້ກໍອາດຈະເວົ້າວ່າ, " ຂ້າພະເຈົ້າສາບານຕໍ່ປຶ້ມພຣະຄັມພີວ່າອັນນີ້ຫລືວ່າອັນນັ້ນເປັນຄວາມຈິງແທ້."

ທີ່ຢາໂກໂບຢາກກ່າວນັ້ນແມ່ນຄໍາເວົ້າຂອງຄຣິສຕຽນຄວນຈະຕ້ອງເຊື່ອຖືໄດ້ໂລດ ໂດຍບໍ່ຈໍາເປັນຈະຕ້ອງໄດ້ຜູກມັດການສາບົດສາບານໃສ່ແຕ່ປະການໃດ. ທ່ານວ່າ "ແມ່ນ" ກໍຄວນຕ້ອງເປັນ " ແມ່ນ " ແລະທ່ານວ່າ, " ບໍ່ແມ່ນ" ກໍຄວນຈະຕ້ອງເປັນ " ບໍ່ແມ່ນ". ຊື່ສຽງຂອງຄົນທີ່ວ່າສັດຊື່ນັ້ນຕ້ອງໃຫ້ຄົບຖ້ວນ ເພື່ອວ່າສິ່ງທີ່ເວົ້າອອກມານັ້ນເປັນຈິງ ແລະເປັນທີ່ໝັ້ນໃຈເຊື່ອຖືໄດ້. ແລະກໍບໍ່ມີຄວາມຈໍາເປັນຈະຕ້ອງມີການຍືນຍັນຕື່ມອີກ.

| ຂໍ້ພຣະຄັມພີທີ່ກ່າວໄວ້ກ່ຽວກັບຄໍາເວົ້າ | |
|---|---|
| ພຣະທັມເພງສັຣເສີນ 19:14 | ພຣະທັມສຸພາສິດ 12:18-19 |
| ພຣະທັມສຸພາສິດ 6:16-19 | ພຣະທັມສຸພາສິດ 16:21-28 |
| ພຣະທັມສຸພາສິດ 10:18-20 | ພຣະທັມມັດທາຍ 12:36-37 |
| ພຣະທັມສຸພາສິດ 11:12-13 | |

ຄວາມຄົບຖ້ວນເຊັ່ນນີ້ຈະປ້ອງກັນຄົນນັ້ນບໍ່ໃຫ້ຕົກຢູ່ໃຕ້ການພິພາກສາໃນເມື່ອຕ້ອງໄດ້ໃຫ້ການຕໍ່ພຣະພັກພຣະເຈົ້າສໍາລັບການເວົ້າສິ່ງໃດສິ່ງນຶ່ງທີ່ບໍ່ຢູ່ໃນຄວາມຈິງ. ຢາໂກໂບອາດຈະເວົ້າລົ້ມຄືນເຖິງການທີ່ເພິ່ນໄດ້ຍິນເມື່ອພຣະເຢຊູວ່າ, " ແຕ່ຝ່າຍເຮົາ ເຮົາບອກທ່ານທັງຫລາຍວ່າ ຢ່າສາບານເລີຍໂດຍອ້າງເຖິງສວັນກໍດີ... ຫລືແຜ່ນດິນໂລກກໍດີ... ຫລືກຸງເຢຣູຊາເລັມກໍດີ... ແຕ່ຈົ່ງໃຫ້ຖ້ອຍຄໍາຂອງພວກທ່ານເປັນດັ່ງນີ້ " ແມ່ນ" ກໍວ່າ " ແມ່ນ " " ບໍ່ແມ່ນ" ກໍວ່າ " ບໍ່ແມ່ນ " ( ມທ 5:34-37 ).

ການຄວບຄຸມຄວາມເວົ້າຂອງພວກເຮົານັ້ນ ເປັນສິ່ງຈໍາເປັນຖ້າຫາກວ່າທ່ານຕ້ອງການໃຫ້ພຣະເຈົ້າພໍພຣະທັຍ. ການເປັນຄົນທີ່ມີຄວາມເຊື່ອ ພວກເຮົາຮູ້ວ່າພວກເຮົາຕ້ອງການຄວາມຊ່ອຍເຫລືອຈາກພຣະເຈົ້າເພື່ອໃຫ້ເວົ້າແຕ່ຄວາມຈິງເພາະຮັກ. ພວກເຮົາຕ້ອງສແວງຫາພະລັງຂອງພຣະເຈົ້າທຸກໆວັນເພື່ອຈະຄວບຄຸມສິ່ງທີ່ເຮົາຄິດແລະສິ່ງທີ່ເຮົາຈະເວົ້າ.

( ອຸປະຖັມໂດຍລາວບັບຕິສສັມພັນ - WWW.LSBF.ORG )